# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ 1 ສິງຫາ 2010 (8-1-2010)

---

## ນັບຖືຄວາມບໍຣິສຸດຂອງພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນນີ້:** 2 ຊາມູເອນ 6:1-15; 17

**ຄໍາຖາມຊີວິດ:** ບົດຮຽນນີ້ຈະຊ່ອຍໜູນໃຈທ່ານໃຫ້ນັບຖືຄວາມບໍຣິສຸດຂອງພຣະເຈົ້າ ດ້ວຍການເຊື່ອຟັງ

**ພຣະຄັມພີແຫ່ງຄວາມຈິງ:** ບົດຮຽນນີ້ເວົ້າເຖິງການນັບຖືຄວາມບໍຣິສຸດຂອງພຣະເຈົ້າ.

**ຜົນສະທ້ອນຕໍ່ຊີວິດ:** ເວລານີ້ໃນສັງຄົມແລະທໍານຽມຂອງພວກເຮົາບໍ່ຄ່ອຍຍໍາເກງ ແລະນັບຖືຄວາມບໍຣິສຸດຂອງພຣະເຈົ້າ. ເຖິງແມ່ນໃນຄຣິສຕະຈັກ ເວລາເຂົ້ານະມັສການກໍເຫັນວ່າຄົນຜູ້ເຂົ້າຮ່ວມນັ້ນບໍ່ຢໍາເກງ ມີແຕ່ເຮັດເປັນພຽງພິທີ. ບໍ່ເປັນພຽງແຕ່ໃຫ້ກຽດ ແລະນັບຖືເທົ່ານັ້ນ, ພວກເຮົາຄວນຈໍາເອົາໄວ້ວ່າການ ຍໍາເກງພຣະເຈົ້າອັນແທ້ຈິງນັ້ນຄືຟັງຄວາມ ແລະປະຕິບັດຕາມຂໍ້ສັ່ງທຸກຢ່າງ.

ມີຄອບຄົວມູສເລັມຈາກປະເທດ ອີຣັກມາຢ້ຽມຢາມຄຣິສຕະຈັກຂອງຂ້າພະເຈົ້າເປັນຄັ້ງທໍາອິດ. ໃນເມື່ອໄດ້ອ່ານປຶ້ມມານາປະຈໍາວັນເຖິງເລື່ອງການມີນໍ້າໃຈຮັບຕ້ອນແຂກທາກໍແລ້ວ, ຂ້າພະເຈົ້າເປັນນາງຊູໄດ້ຕ້ອນຮັບພວກເຂົາເປັນພິເສດ. ຍ້ອນການຕອບຮັບຢ່າງອົບອຸ່ນນັ້ນ ພວກເຂົາໄດ້ສມັກໃຈກາຍເປັນສະມາ ຊິກຂອງໂຮງຮຽນວັນອາທິດ ແລະເອົາໃຈໃຊ້ເຂົ້າຮ່ວມເປັນປົກກະຕິທຸກໆອາທິດ ພວກເຂົາຍັງສົນໃຈຢາກຮູ້ເຖິງຫລັກຄວາມເຊື່ອຂອງຄຣິສະຕຽນອີກ. ພວກເຂົາສຶກສາຮຽນຮູ້ເຖິງຄວາມຈິງເລື່ອງພຣະເຈົ້າແລະກໍມີຄວາມຍໍາເກງພຣະອົງ.

ກະສັດດາວິດໄດ້ຮຽນເຖິງການຍໍາເກງນັບຖືພຣະເຈົ້າດ້ວຍຕົນເອງຢ່າງຍາກລໍາບາກ. ແນ່ນອນເພິ່ນມີນໍ້າໃຈບໍຣິສຸດທີ່ຈະນັບຖື ແລະໃຫ້ກຽດແກ່ພຣະເຈົ້າໃນເວລາເພິ່ນໄດ້ຍົກຍ້າຍຫີບພຣະສັນຍາກັບມາໄວ້ໃນກຸງເຢຣູຊາເລັມຊຶ່ງເປັນສູນກາງປະຊາກອນຂອງພຣະເຈົ້າ, ແຕ່ເຫັນວ່າການມີຈິດໃຈຢາກເຮັດຢ່າງແທ້ຈິງນັ້ນກໍບໍ່ເປັນການພຽງພໍ. ເພິ່ນມີຈິດໃຈຢາກເອົາພຣະພັກຂອງພຣະເຈົ້າກັບໄປສູ່ປະຊາກອນຂອງພຣະອົງ (1 ຂ່າວຄາວ 13:3)

### 1. <u>ໃຫ້ກຽດແກ່ພຣະເຈົ້າໃນວິທີທາງຂອງພຣະອົງ</u> (2 ຊາມູເອນ 6:1-5)

ໃນສະມັຍຂອງຜູ້ປະກາດພຣະທັມ ຊາມູເອນ ເວລາເພິ່ນຍັງເປັນເຍົາວະຊົນຢູ່ ຫີບພຣະສັນຍານັ້ນຕັ້ງຢູ່ເມືອງ**ບາອາລາ ໃນຢູດາ.** ຫີບພຣະສັນຍາ ນັ້ນໝາຍເຖິງການສະຖິດຂອງພຣະເຈົ້າ ເວລາຍົກຍ້າຍໄປໄວ້ທີ່ອື່ນຕາມໃຈນັ້ນ ກໍເປັນການບໍ່ໃຫ້ຄວາມສໍາຄັນຕໍ່ພຣະເຈົ້າ.

**ຫີບພຣະສັນຍາ**

ຫີບພຣະສັນຍາມີລວງສູງ ລວງກວ້າງ ແລະລວງຍາວ 45 ຄູນ 27 ຄູນ 27 ເຮັດດ້ວຍໄມ້ຢ່າງດີ, ທາງໃນເປັນຄໍາ

ບໍຣິສຸດຊັ້ນດີ. ຝາອັດ ມີຊື່ວ່າ ບ່ອນນັ່ງແຫ່ງຄວາມເມດຕາ ເຮັດດ້ວຍຄຳສິດ ເປັນຮູບເວທະດາເຊລາພິມສອງຕົນ ມີປີກປີກໄປເຖິງບ່ອນນັ່ງແຫ່ງຄວາມເມດຕາ. ປີລະເທື່ອມະຫາປະໂລຫິດຕົນໃຫຍ່ໄດ້ເອົາເລືອດສັດບູຊາໄປຈຸ່ມໃສ່ບ່ອນນັ່ງແຫ່ງຄວາມເມດຕາເພື່ອເປັນການຊຳຣະຄວາມຜິດບາບຂອງປະຊາຊົນ. ຫີບພຣະສັນຍານັ້ນເປັນຕົວແທນການສະຖິດຂອງພຣະເຈົ້າກັບຝູງຊົນ. ພວກເຂົາໄດ້ນະມັສການອົງພຣະຜູ້ເປັນເຈົ້າຊຶ່ງເປັນຊີວິດຈິດໃຈຂອງພວກເຂົາ.

ກະສັດດາວິດໄດ້ມີຄວາມຜິດພາດອັນໃຫຍ່ຫລວງໃນເມື່ອເພິ່ນຈັດຕຽມນຳເອົາຫີບພຣະສັນຍາກັບໄປໄວ້ໃນກຸງເຢຣູຊາເລັມອີກ. ເພິ່ນມີນ້ຳໃຈບໍຣິສຸດຈະເຮັດດັ່ງນັ້ນ ແຕ່ເຫັນວ່າເປັນການບໍ່ຢຳເກງພຣະເຈົ້າ. ນຶ່ງ, ເພິ່ນໄດ້ຈັດເອົາ **30,000 ຊາຍສະກັນ**ຮັກສາຫີມພຣະສັນຍານັ້ນ ເພື່ອບໍ່ໃຫ້ຫີບພຣະສັນຍານັ້ນຕົກໄປໃນມືຂອງພວກສັດຕຣູ. ແຕ່ຮູ້ວ່າພຣະເຈົ້າບໍ່ຕ້ອງການການປົກປ້ອງໃດໆທັງສິ້ນ; ແຕ່ດາວິດຕ່າງຫາກຕ້ອງການຄວາມປົກປ້ອງຮັກສາຈາກພຣະເຈົ້າ.

ສອງ, ກະສັດດາວິດມີຄວາມຜິດໃນການໃຊ້**ຣົດກວຽນລໍ້**ໃໝ່ຕ່າງຫີບພຣະສັນຍາ. ຕາມປົກກະຕິແລ້ວຕ້ອງແມ່ນມະຫາປະໂຣຫິດເຮັດໜ້າທີ່ນີ້, ພວກເຂົາຫາມຫີບພຣະສັນຍານີ້ໂດຍໃຫ້ໄມ້ຄານຍາວຫາມໄປ (ອົບພະ ຍົບ 25:14-15. ຈົດບັນຊີ 1:50-51). ຖ້າເຮັດດັ່ງນີ້ ພວກປະໂຣຫິດກໍຢຳເກງແລະໃຫ້ກຽດແກ່ພຣະເຈົ້າ. ມີພຽງຄັ້ງດຽວເວລາຫີບພຣະສັນຍາໄດ້ຖືກຕ່າງໄປໂດຍຣົດ ຄືເວລາພວກຟີລິສຕິນຍຶດເອົາໄປໄວ້ໃນເມືອງຂອງເຂົາ ເວລາມີເຫດຮ້າຍເກີດຂຶ້ນພວກເຂົາກໍສົ່ງຫີບພຣະສັນຍານີ້ຄືນເພາະພວກເຂົາບໍ່ຢຳເກງ ແລະນັບຖືຄວາມບໍຣິສຸດຂອງພຣະເຈົ້າ. (1 ຊາມູເອນ 6:7-12). ກະສັດດາວິດຄວນຮຽນຮູ້ວ່າການຫາມຫີບພຣະສັນ ຍານັ້ນຕ້ອງແມ່ນໜ້າທີ່ຂອງປະໂຣຫິດ ແຕ່ເພິ່ນໄດ້ໃຫ້ ອູຊາ ແລະອາຫີໂອ ລູກຊາຍຂອງ ອາບີນາແດດ ຫາມຫີບພຣະສັນຍານັ້ນ.

ໃນເມື່ອຫີບພຣະສັນຍາມຸ້ງໜ້າໄປສູ່ກຸງເຢຣູຊາເລັມ, ກະສັດດາວິດ ແລະພວກອິສຣາເອນທຸກໆຄົນໄດ້ນະມັສການອົງພຣະຜູ້ເປັນເຈົ້າ. ພວກເຂົາໄດ້ໃຊ້ເຄື່ອງດົນຕຣີຫລາຍໆຢ່າງເສບສລອງຊຶ່ງໝາຍຄວາມວ່າ ຊາດຂອງພວກເຂົາໄດ້ເອົາພຣະເຈົ້າກ່ອນທຸກສິ່ງ. ການນະມັສການດ້ວຍຄວາມບໍຣິສຸດໃຈນັ້ນດີ ແຕ່ຖ້າບໍ່ຈິງໃຈພຣະເຈົ້າກໍບໍ່ຮັບເອົາການນະມັສການນັ້ນ. ຕອນນີ້ເຫັນວ່າກະສັດດາວິດບໍ່ໄດ້ເຊື່ອຟັງຄຳສອນຂອງພຣະເຈົ້າ ເພິ່ນຕ້ອງການເຮັດສິ່ງທີ່ຖືກຕ້ອງກ່ອນຫີບພຣະສັນຍາຈະເຄື່ອນໄປໄດ້.

2. <u>**ນັບຖືຄວາມບໍຣິສຸດຂອງພຣະເຈົ້າ**</u> (2 ຊາມູເອນ 6:6-11)

ການກະທຳຂອງກະສັດດາວິນນັ້ນເປັນການບໍ່ໃຫ້ກຽດແດ່ພຣະເຈົ້າ. ການນະມັສພຣະເຈົ້າກໍຢຸດຊະງັກໃນເມື່ອມາເຖິງ **ນາຄານ ບ່ອນຟັດເຂົ້າ.** ໃນເມື່ອງົວເຖິກແກ່ກວຽນຫີບພຣະສັນນັ້ນເຕະສະດຸດ. ອູຊາ ໄດ້ເອົາມືໄປເຈັບບໍ່ໃຫ້ຫີບນັ້ນຂວ້າມ. ລາວມີຈິດໃຈຈະຊ່ອຍແຕ່ພຣະເຈົ້າໄດ້ເຕືອນກ່ອນແລ້ວເຖິງການຈັບບາຍສິ່ງຂອງບໍຣິສຸດ ຖ້າຝ່າຝືນຕ້ອງຕາຍເປັນແນ່ (ຈົດບັນຊີ 4:15). ຄວາມມີຈິດໃຈກະຕືເຫລືອລົ້ນນັ້ນບໍ່ສາມາດທົບແທນການເຊື່ອຟັງຫົນທາງຂອງພຣະເຈົ້າໄດ້.

ຜູ້ຂຽນ 2 ຊາມູເອນ ໄດ້ກ່າວເຖິງເຫດການທີ່ເກີດຂຶ້ນນັ້ນຄື**ພຣະເຈົ້າມີຄວາມໂກດຮ້າຍຕໍ່ສູ້ ອູຊາ ແລະພຣະອົງໄດ້ໃຫ້ລາວຕາຍໃນເວລານັ້ນເລີຍ.** ການທີ່ບໍ່ໃຫ້ຄວາມນັບຖືໄດ້ນຳການລົງໂທດມາເຖິງຕົນເອງ. ອູຊາ ໄດ້ເຮັດຜິດອັນໃຫຍ່ ບາງທີ ອູຊາໄດ້ລຶ້ງເຄີຍເພາະລາວໄດ້ເອົາຫີບພຣະສັນຍາໄວ້ໃນບ້ານຂອງຕົນເອງເປັນເວລານານສົມຄວນ (1 ຊາມູເອນ 7:1-2; 2: 6:2-4). ອູຊາ ເຮັດໃຫ້ສູນເສັຽຄວາມຍິ່ງໃຫຍ່ຂອງພຣະເຈົ້າໄປ ແລະເວລານະມັສການພຣະອົງກໍຖືວ່າເປັນສິ່ງທີ່ຕ້ອງເຮັດທຳມະດາ.

ຫລາຍໆເທື່ອພວກເຮົາຂາດຄວາມຢຳເກງແລະນັບຖືພຣະເຈົ້າເວລາພວກເຮົານະມັສການ ພຣະເຈົ້າຜູ້ບໍຣິສຸດ ເພາະຄວາມຄຸ້ນເຄີຍທີ່ພວກເຮົາເຂົ້ານະມັສການພຣະອົງແຕ່ລະອາທິດ. ພວກເຮົາຫລົງລືມໄປວ່າພຣະເຈົ້າຈະກະທຳອັສຈັນອັນຍິ່ງໃຫຍ່ແຕກຕ່າງກັນແຕ່ລະຄັ້ງ. ພວກເຮົາມັກຖືວ່າການນະມັສການເປັນເຫດການ ແທນທີ່ຈະຖືວ່າເປັນການຊົງສະຖິດຂອງພຣະເຈົ້າຢູ່ກັບພວກເຮົາ. ອູຊາ ແລະປະຊາຊົນນະມັສການແທ້, ແຕ່ໃນເມື່ອພຣະເຈົ້າສະເດັດມາໃນຖ້າມກາງ ພວກເຮົາຊ້ຳພາກັນແຕກຕື່ນ.

ກະສັດດາວິດໃນເມື່ອເຫັນ ອູຊາຕາຍໄປ ເພິ່ນກໍມີຄວາມຮູ້ສຶກສອງຢ່າງ. ນຶ່ງ, ເພິ່ນ**ໃຈຮ້າຍ** ( 2 ຊາມູເອນ 6:8). ຕໍ່ມາເພິ່ນໄດ້ປັ່ງນແປງວິທີການເວລາເພິ່ນຍົກຍ້າຍຫີບພຣະສັນຍາ. ຈິດໃຈຮ້າຍຂອງເພິ່ນນັ້ນ ນຳໄປເຖິງຢ່າງທີສອງ, -ຄືຢ້ານກົວແລະຢຳເກງ. ເພິ່ນໄດ້ບໍ່ໄດ້ຍົກຍ້າຍຫີບພຣະສັນຍາ ເພິ່ນໄດ້ປະໄວ້ໃນເຮືອນຂອງ **ໂອບີອີເດັມ** ປະມານສາມເດືອນ. ໃນທີ່ສຸດພຣະເຈົ້າກໍໄດ້ຊົງອວຍພຣະພອນໃນເຮືອນນັ້ນເໝືອນ ພຣະເຈົ້າໄດ້ຈັດຫາໃຫ້ຄົນຜິດບາບໄດ້ຮັບພຣະພອນໂດຍອົງພຣະເຢຊູເຈົ້າ.

## 3. <u>ການນະມັກສານຢ່າງກະຕືເຫລືອລົ້ນແລະຢຳເກງ</u> (2 ຊາມູເອນ 6:12-15,17)

ກະສັດດາວິດປະສົບການຄັ້ງທຳອິດກັບຫີບພຣະສັນຍາເຮັດໃຫ້ເພິ່ນມີຄວາມຢຳເກງແລະນັບຖືຄວາມສັກສິດຂອງພຣະເຈົ້າເພີ້ມຂຶ້ນ. ເພິ່ນເຂົ້າໃຈເຖິງເຫດຜົນວ່າເປັນດ້ວຍເຫດໃດປະຊາຊົນຈຶ່ງຕ້ອງການຢາກໃຫ້ຫີບພຣະສັນຍາຕັ້ງໄວ້ໃນຫົວໃຈຂອງຊາດ. ໃນເມື່ອເພິ່ນຍົກຍ້າຍຫີບພຣະສັນຍາຄັ້ງຕໍ່ໄປເພິ່ນໄດ້ເຮັດແຕກຕ່າງດ້ວຄວາມຢຳເກງ ເພິ່ນສັ່ງເດັດຂາດບໍ່ໃຫ້ຄົນອື່ນຫາມຫີບພຣະສັນຍານັ້ນນອກຈາກພວກລີວາຍ (1 ຂ່າວຄາວ 15:2). ເພິ່ນຍັງສັ່ງໃຫ້ມີຄົນຫາມຫີບພຣະສັນຍາໄປ (1 ຂ່າວຄາວ 15:15). ສິ່ງທີ່ກະສັດດາວິດໄດ້ເຮັດແຕກຕ່າງເພີ້ມ ເພິ່ນໄດ້ຖວາຍບູຊາທຸກຫົກກ້າວ ເພິ່ນເຮັດດັ່ງນີ້ຈົນເຖິງຫີບພຣະສັນຍາໄປເຖິງປາຍທາງຂອງການເດີນທາງນັ້ນ. ເພິ່ນບໍ່ນະມັສການລ້າໆປາສຈາກການຖວາຍບູຊາ. ໃນທຸກວັນນີ້ພວກເຮົາກໍບໍ່ສາມາດນະມັສການໄດ້ປາສຈາກການຖວາຍຂອງອົງພຣະເຢຊູໄດ້ເຮັດເພື່ອພວກເຮົາ.

ເພີ້ມຄວາມຢຳເກງແລະໃຫ້ກຽດແກ່ພຣະເຈົ້າ ກະສັດດາວິດໄດ້ນະມັສການພຣະເຈົ້າຢ່າງໝົດໃຈ. ເພິ່ນຍັງໄດ້ນຸ່ງເຄື່ອງຄຳແລະເຕັ້ນເວລານະມັສກາອີກ, ເຄື່ອງເພິ່ນໃສ່ນັ້ນໄດ້ກ່ຽວພັນກັບພວກປະໂຣຫິດ ເພາະບໍ່ແມ່ນກະສັດເປັນຜູ້ນຳໃນເວລານະມັສການ. ເຄື່ອງນຸ່ງຢ່າງນີ້ໄດ້ໝາຍເຖິງການສະຖິດຢູ່ນຳຂອງພຣະເຈົ້າ. ເພິ່ນໄດ້ຮ້ອງໂຮ່ ແລະໃຊ້ເຂົາສັດເປັນແກເປົ່າດັ່ງກ້ອງທົ່ວຫີບ. ໃນສມັຍຂອງໂຢຊວຍໄດ້ໃຊ້ເຂົາແກະເຖິກເປົ່າໃຫ້ປະຊາຊົນໄດ້ຍິນວ່າຫີບພຣະສັນຍານັ້ນຍົກຍ້າຍໄປ (ໂຢຊວຍ 6:4-20).

.

> ການມີຈິດໃຈກະຕືເຫລືອຫລົ້ນນັ້ນບໍ່ເປັນການພຽງພໍໃນເວລານະມັສການ; ພວກເຮົາຕ້ອງມີຄວາມຢຳເກງ ແລະໃຫ້ກຽດແກ່ພຣະເຈົ້າ.

### ຄຸນສົມບັດ 7 ຢ່າງໃນການນະມັສການອັນແທ້ຈິງ

- ມີນ້ຳໃຈເຮັດຕາມພຣະປະສົງຂອງພຣະເຈົ້າ
- ຢຳເກງຕໍ່ພຣະເຈົ້າກັບສິ່ງທີ່ພຣະອົງໄດ້ກະທຳມາແລ້ວ
- ຮູ້ຈັກວ່າພຣະອົງຊົງສະຖິດຢູ່ນຳ
- ຮູ້ຕົວເອງດີວ່າ ຕົນບໍ່ສົມຄວນແລະມີຄຸນຄ່າອັນໃດ
- ____________________
- ____________________
- ____________________

ໃນເມື່ອພວກເຂົາໄດ້ເດີນທາງໄປຮອດກຸງເຢຣູຊາເລັມ ກະສັດວິດໄດ້ເອົາຫີບພຣະສັນຍານັ້ນຕັ້ງໄວ້ໃນບ່ອນສົມຄວນໃນຜ້າເຕັ້ນ. ເພິ່ນໄດ້ຖວາຍເຄື່ອງບູຊາຕໍ່ອົງພຣະຜູ້ເປັນເຈົ້າຄືເຜົາບູຊາ ແລະຖວາຍຂອງບູຊາເພື່ອ ຄວາມສາມະຄີທັມ. ເພິ່ນໄດ້ສັຣເສີນພຣະເຈົ້າເພາະພຣະອົງໄດ້ຊົງສະຖິດໃນຖ້າມກາງປະຊາຊົນທັງຫລາຍ.

## ບົດຮຽນໃນຊີວິດ

ມີຫລາຍຄົນໃນພວກເຮົາມີນ້ຳໃຈຢາກເຂົ້ານະມັສການພຣະເຈົ້າທຸກໆອາທິດ ແຕ່ເຫັນວ່າພວກເຮົາລົ້ງເຄີຍຈົນເກີນໄປທີ່ຈະຢຳເກງຄວາມບໍຣິສຸດຂອງພຣະເຈົ້າ. ພວກເຮົາອາດລືມໄປໄດ້ວ່າພຣະເຈົ້າສົມ ຄວນໄດ້ຮັບການສັຣເສີນຈາກພວກເຮົາ ເພາະພຣະອົງມີພຣະລັງແລະອຳນາດອັນໃຫຍ່ທີ່ຈະປ່ຽນແປງພວກເຮົາໃຫ້ດີຂຶ້ນໄດ້. ພວກເຮົາໄດ້ເຂົ້າຮ່ວມນະມັສການເປັນພຽງພິທີຕາມຄວາມຮູ້ສຶກໂດຍບໍ່ສຳນຶກວ່າພຣະເຈົ້າໄດ້ສະຖິດໃນຖ້າມການພວກເຮົາເວລານະມັສການ. ພວກເຮົາອາດບໍ່ຢຳເກງ ນັບຖື ແລະໃຫ້ກຽດແດ່ພຣະອົງຕາມສົມຄວນ.

ບົດຮຽນນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຫລັການໃນການນັບຖື ຢຳເກງຄວາມບໍຣິສຸດຂອງພຣະເຈົ້າ:

- ໃຫ້ຈຳໄວ້ວ່າການນະມັສການທີ່ບໍ່ມີການເຊື່ອຟັງເຮັດໃຫ້ການນະມັສການນັ້ນໝົດຄວາມໝາຍ.
- ຫລາຍໆຄັ້ງພວກເຮົາບໍ່ມີຄວາມຢຳເກງຕໍ່ພຣະພັກ ແລະພະລັງຂອງພຣະເຈົ້າ.
- ໃນເມື່ອພວກເຮົາຢຳເກງ ແລະນັບຖືຄວາມບໍຣິສຸດຂອງພຣະເຈົ້າ ແລະພາກັນນະມັສການພຣະອົງຕາມພຣະອົງຊົງກ່າວໄວ້ ພວກເຮົາກໍກາຍມີຈິດໃຈກະຕືລືລົ້ນ ແລະນັບຖືພຣະອົງຢ່າງຖືກຕ້ອງແລະສົມຄວນ.
- ການມີຈິດໃຈດີນັ້ນອາດບໍ່ເປັນການພຽງພໍ; ພຣະເຈົ້າຕ້ອງການພວກເຮົາໃຫ້ເຊື່ອຟັງພຣະດຳຣັດຂອງພຣະອົງ.

ບໍ່ນານມານີ້ໃນຄຣິສຕະຈັກຂອງຂ້າພະເຈົ້າ ພຣະເຈົ້າໄດ້ກະທຳການຢ່າງແປກປລາດ. ເວລາສະມາຊິກພາກັນຮ້ອງເພງສັຣເສີນ ມີຄົນເປັນຈຳນວນຫລາຍໄດ້ຍ່າງອອກມາຂ້າງໜ້າ ພາກັນມາອະທິຖານຢູ່ໃກ້ທຳມາດໂດຍທີ່ບໍ່ມີຜູ້ໃດໄດ້ບອກພວກເຂົາເຈົ້າເຮັດ. ພວກເຂົາຮູ້ວ່າແມ່ນພຣະເຈົ້າໄດ້ສະຖິດໃນຖ້າມກາງ ແລະພຣະອົງໄດ້ເຮັດໃຫ້ຜູ້ເຂົ້າຮ່ວມນະມັສການນັ້ນມີຄວາມຢຳເກງນັບຖື ແລະຍິນດີທີ່ມີໂອກາດເຂົ້າຮ່ວມນະມັການໃນຕອນນັ້ນ. ພວກສະມາຊິກໄດ້ພາກັນອ້ອນວອນເພື່ອຄົນຫລົງຫາຍ ແລະຄົນທີ່ບໍ່ຮູ້ຈັກກັບພຣະອົງ ໃຫ້ພຣະເຈົ້າໃຊ້ພວກເຂົາອອກໄປປະກາດແລະເປັນພະຍານຕໍ່ຄົນເຫລົ່ານັ້ນ. ພວກເຂົາກໍໄດ້ຮັບການໃຫ້ອະພັຍ ແລະເພີ້ມພະລັງໃຫ້ໃນການຮັບໃຊ້. ໃນທີ່ສຸດສະມາຊິກກໍໄດ້ຮັບການຊົງປ່ຽນແປງ ໂດຍການປະເຊີນກັບພຣະເຈົ້າເປັນການສ່ວນຕົວ. ພວກເຂົາໄດ້ຮຽນຮູ້ເຖິງການໃຫ້ກຽດ ນັບຖື ຢຳເກງຕໍ່ພຣະເຈົ້າເປັນຢ່າງດີ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.